multicultural health communication

NSW GOVERNMENT | Health

Lao
[DOH-7175]

# ໂຣກ Psittacosis

## Psittacosis

### Psittacosis ແມ່ນຫຍັງ?

- Psittacosis ແມ່ນພຍາດທີ່ບໍ່ຄ່ອຍເປັນກັນ ຊຶ່ງຕາມປົກກະຕິຈະຖ່າຍທອດຈາກນົກໄປຫາຄົນ. ໂຣກນີ້ເກີດຂຶ້ນຍ້ອນແບັກທີເຣັຍຊນິດນຶ່ງເອີ້ນວ່າ Chlamydia psittaci.

### ເຊື້ອໂຣກແຜ່ພາຍໄດ້ຢ່າງໃດ?

- ການຕິດເຊື້ອສ່ວນໃຫຍ່ຈະເກີດຂຶ້ນເມື່ອຄົນຫາຍໃຈເອົາແບັກທີເຣັຍເຂົ້າໄປ, ຕາມປົກກະຕິແມ່ນຈາກຂີ້ນົກແຫ້ງຂອງນົກທີ່ມີເຊື້ອ. ຄົນກໍສາມາດຕິດເຊື້ອໄດ້ໂດຍການຕິດຕໍ່ຈາກປາກຄົນຫາປາກນົກ (ຈູບນົກ) ຫຼື ໂດຍການຈັບບາຍຂົນນົກຫຼືເຍື່ອຜິວໜັງຂອງນົກທີ່ມີເຊື້ອ. ບໍ່ໄດ້ມີການຢືນຢັນວ່າໂຣກ psittacosis ແຜ່ພາຍຈາກຄົນຫາຄົນ.
- ນົກທຸກຕົວອ່ອນໄຫວຕໍ່ການຕິດເຊື້ອ, ແຕ່ວ່ານົກລ້ຽງ (ຕົວຢ່າງ ນົກແກ້ວ, ນົກແກ້ວຫາງຍາວ ແລະນົກແກ້ວຂາວ); ແລະສັດປີກ (ໄກ່ງວງແລະເປັດ) ແມ່ນເປັນສາເຫດໃນການຖ່າຍທອດເຊື້ອໃຫ້ແກ່ຄົນເລື້ອຍທີ່ສຸດ.
- ຄົນທີ່ສ່ຽງທີ່ສຸດຕໍ່ການຕິດເຊື້ອໂຣກ psittacosis ແມ່ນຜູ້ທີ່ໃກ້ຊິດກັບນົກຍ້ອນວຽກ ຫຼື ງານອະດິເຣກ. ຕົວຢ່າງ: ເຈົ້າຂອງນົກ, ພະນັກງານຮ້ານຂາຍສັດລ້ຽງ, ສັຕວະແພດ, ຫຼືຄົນທີ່ຜລິດສັດປີກຕ່າງໆ.

### ອາການຂອງ Psittacosis ມີຫຍັງແດ່?

- ລະຍະເວລາທີ່ຄົນເລີ້ມຕິດເຊື້ອແບັກທີເຣັຍແລະຕອນເລີ້ມອອກອາການຈະຢູ່ໃນລະຫວ່າງ ສີ່ຫາ 15 ມື້.
- ຄົນທີ່ມີເຊື້ອ psittacosis ສ່ວນໃຫຍ່ຈະມີອາການຄ້າຍໄຂ້ຫວັດໃຫຍ່, ຊຶ່ງໃນທັນທີຈະຄີງຮ້ອນ, ໜາວສັ່ນ, ເຈັບຫົວ, ອ່ອນເພັຍ ແລະ ປວດຕາມກ້າມເນື້ອ. ຄົນເຈັບອາດຈະມີອາການໄອແຫ້ງນຳ, ເຈັບເອິກ ແລະ ຫາຍໃຈບໍ່ອອກ. ໃນກໍຣະນີມີ່ເປັນແຮງ, ຈະເປັນໂຣກປອດບວມດ້ວຍ.

**ຈະກວດຫາເຊື້ອ Psittacosis ໄດ້ຢ່າງໃດແລະປິ່ນປົວວິທີໃດ?**

- ຖ້າທ່ານໝໍຄິດວ່າຄົນຜູ້ນຶ່ງເປັນໂຣກ psittacosis, ເພິ່ນຈະເອົາເລືອດໄປກວດເພື່ອຢັ້ງຢືນການວິນິດສັຍໂຣກ. ໂດຍທົ່ວໄປແລ້ວ ການເອັກສເຣຍ໌ໜ້າເອິກຈະສະແດງໃຫ້ເຫັນວ່າມີປອດບວມ.
- ການປົວ ໂຣກ psittacosis ແມ່ນໃຊ້ຢາຕ້ານເຊື້ອ. ຢານີ້ຕ້ອງກິນຕິດຕໍ່ກັນເປັນເວລາສອງອາທິດ.
- ເປັນສິ່ງສຳຄັນທີ່ຕ້ອງພຍາຍາມໃຫ້ຮູ້ວ່າການຕິດເຊື້ອເກີດມາຈາກໃສ. ຄວນບອກໃຫ້ຄົນອື່ນໆທີ່ອາດໄດ້ໃກ້ຊິດກັບນົກທີ່ມີເຊື້ອ ຮູ້ເຖິງອາການຂອງເຊື້ອໂຣກ. ຕ້ອງໄດ້ປິ່ນປົວນົກທີ່ມີເຊື້ອແລະສິ່ງແວດລ້ອມຂອງມັນກໍຕ້ອງໄດ້ທຳຄວາມສະອາດດ້ວຍຢາຂ້າເຊື້ອໂຣກເພື່ອປ້ອງກັນບໍ່ໃຫ້ມີການແຜ່ຜາຍໄປເຖິງຄົນອື່ນໆຫຼືນົກຕົວອື່ນໆ.

**ເຮັດຢ່າງໃດຂ້ອຍຈຶ່ງຈະຮູ້ວ່ານົກຕິດເຊື້ອແລ້ວ?**

- ໃນກໍຣະນີຂອງນົກ, ອາການຂອງການຕິດເຊື້ອອາດຈະແມ່ນຕັ້ງແຕ່ບໍ່ສໍ່ອາການຫຍັງທັງໝົດຈົນໄປເຖິງຂັ້ນຕາຍ. ນົກທີ່ເຈັບອາດມີອາການຕ່າງໆເຊັ່ນ ຖ່າຍທ້ອງ, ອ່ອນເພັຍ, ຂົນຊັນ, ບໍ່ກິນອາຫານ ແລະ ນ້ຳຕາແລະຂີ້ມູກໄຫຼ. ຖ້າສົງສັຍ, ຄວນເອົານົກໄປໃຫ້ສັຕວະແພດກວດເບິ່ງ. ນົກທີ່ຕິດເຊື້ອຕ້ອງໄດ້ແຍກໄວ້ຕ່າງຫາກ, ໃຫ້ປົວດ້ວຍຢາຕ້ານເຊື້ອ ແລະ ທຳການຂ້າເຊື້ອທີ່ກົງຂອງມັນ.
- ເນື່ອງຈາກວ່າເປັນການຍາກທີ່ຈະບອກໄດ້ວ່ານົກຕິດເຊື້ອຫຼືບໍ່, ເຮົາຈຶ່ງຕ້ອງໄດ້ຮັກສາຄວາມສະອາດຢ່າງເຄັ່ງຄັດ, ຮວມທັງການລ້າງມື ເມື່ອຈັບບາຍນົກລ້ຽງ. ໃຫ້ຫຼີກເວັ້ນຈາກການຈູບນົກລ້ຽງ (ຈາກປາກຄົນຫາປາກນົກ).
- ຄວນຈະຂັງນົກໄວ້ໃນກົງອັນກວ້າງຂວາງ ທີ່ສະອາດ ຊຶ່ງປູດ້ວຍໜັງສືພິມ ແລະ ປ່ຽນເລື້ອຍໆ. ບໍ່ຄວນປ່ອຍໃຫ້ຂີ້ນົກກອງກັນຂຶ້ນ, ບໍ່ໃຫ້ຂີ້ມັນແຫ້ງ ເພາະຝຸ່ນຂີ້ແຫ້ງຂອງມັນຈະປົວໄປໃນອາກາດ. ໃຫ້ເຮັດໃຫ້ຂີ້ນົກແລະຄອກນົກຊຸ່ມເສັຍກ່ອນ ຈຶ່ງທຳຄວາມສະອາດ.
- ຄວນຈະຊື້ນົກຈາກຮ້ານຂາຍສັດຫຼືສະຖານທີ່ລ້ຽງນົກທີ່ມີໃບອະນຸຍາດເທົ່ານັ້ນ.

## ຣາຍລະອຽດເພີ້ມເຕີມ – ພແນກສາທາຣະນະສຸກແຫ່ງຣັດ NSW



**1300 066 055**

**www.health.nsw.gov.au**